Washington State Department of Social & Health Services

ຣັດວໍຊິງຕັນ
ກົມສັງຄົມ ແລະ ສິ່ງເສີມ
ຜະແນກຊ່ວຍເຫລືອເກັບເງິນລ້ຽງເດັກ
DIVISION OF CHILD SUPPORT (DCS)
ການອະນຸຍາດຈ່າຍແບບ ອັດໂນມັດ ແລະ
ລາຍລະອຽດກ່ຽວກັບການໂອນເງິນດ້ວຍ ເຄື່ອງເອເລັກທະໂຣນິກ
AUTOMATIC PAYMENT AUTHORIZATION AND
ELECTRONIC FUNDS TRANSFER INFORMATION

ການອະນຸຍາດຈ່າຍແບບ ອັດໂນມັດ ແມ່ນຫຍັງ?

ການອະນຸຍາດຈ່າຍແບບ ອັດໂນມັດ ແມ່ນການອະນຸຍາດຂອງທ່ານໃຫ້ ຜະແນກຊ່ວຍເຫລືອເກັບເງິນລ້ຽງເດັກ (DCS) ເພື່ອຕັດເອົາເງິນລ້ຽງເດັກຈາກ ບັນຊີ ເຊັກຄິງ ຫລື ເຊວວິງ ຂອງທ່ານດ້ວຍ ເຄື່ອງເອເລັກທະໂຣນິກ (EFT). ໃຫ້ທ່ານເລືອກເອົາມື້ນຶ່ງ ຫລື ຫລາຍມື້ຂອງເດືອນນັ້ນໃຫ້ພວກເຮົາ ຕັດເອົາເງິນ. ຖ້າວ່າມື້ນັ້ນຕົກຖືກ ວັນເສົາ, ວັນອາທິດ, ຫລື ມື້ພັກຂອງທະນາຄານ, ພວກເຮົາຈະຕັດເອົາການຈ່າຍເງິນໃນມື້ເປີດທຸຣະກິດຕໍ່ໄປ. ຖ້າວ່າການຕັດເອົາເງິນຕົກຖືກມື້ສຸດທ້າຍຂອງເດືອນ, ແລະ ມື້ນັ້ນແມ່ນ ວັນເສົາ ຫລື ວັນອາທິດ, ພວກເຮົາຈະຕັດເອົາເງິນຈ່າຍນັ້ນໃນ ວັນສຸກ ສຸດທ້າຍຂອງເດືອນ. ພວກເຮົາຈະເຮັດການຈ່າຍໃຫ້ສໍານວນຂອງທ່ານໃນມື້ເຮັດການຕັດເງິນອັນນັ້ນ.

ການຕັດເອົາເງິນດ້ວຍ ເຄື່ອງເອເລັກທະໂຣນິກ (EFT) ນັ້ນບໍ່ສາມາດໃຊ້ແທນການໃຫ້ປະຕິບັດຕັດເອົາເງິນເດືອນຂອງ ຣັຖບານກາງ. ຖ້າສໍານວນຂອງ ທ່ານມີຂໍ້ກໍານົດໃຫ້ພວກເຮົາເພື່ອຕັ້ງການຕັດເອົາເງິນເດືອນ, ພວກເຮົາຈະດໍາເນີນເຮັດຕໍ່ໄປ.

ຖ້າຂ້າພະເຈົ້າຕ້ອງໃຫ້ຕັດເອົາເງິນຈ່າຍແບບ ອັດໂນມັດ ຈາກບັນຊີຂອງຂ້າພະເຈົ້າ, ຂ້າພະເຈົ້າຈະເຮັດຢ່າງໃດ?

ເກັບໜ້າທີ່ **1** ຂອງໃບຟອມນີ້ໄວ້ສໍາລັບການຢັ້ງຢືນພາຍຂ້າງໜ້າ.

ປະກອບໜ້າທີ່ **2** ຂອງໃບຟອມນີ້(ການອະນຸຍາດຈ່າຍແບບ ອັດໂນມັດ). ຖ້າທ່ານມີບັນຊີຮ່ວມກັນ, ໃຫ້ແນ່ນອນວ່າຜູ້ຖືບັນຊີທັງສອງຄົນນັ້ນເຊັນການ ອະນຸຍາດ. ໃຫ້ຕິດຄັດ ເຊັກ ທີ່ຂີດຂ້າຂຽນບອກว່າໃຊ້ບໍ່ໄດ້ ຫລື ໃບຝາກເງິນເຂົ້າບັນຊີທະນາຄານຂອງທ່ານມານໍາ.

ໃຫ້ສົ່ງໃບຟອມທັງສອງໜ້ານີ້ ແລະ ເຊັກ ທີ່ຂີດຂ້າຂຽນບອກว່າໃຊ້ບໍ່ໄດ້ ຫລື ໃບຝາກເງິນເຂົ້າບັນຊີທະນາຄານຄືນໄປໃຫ້:

DIVISION OF CHILD SUPPORT
EFT PAYMENTS
P O BOX 9010
OLYMPIA WA 98507-9010

ຕໍ່ໄປຈະເຮັດຢ່າງໃດ?

ເຈົ້າໜ້າທີ່ຊ່ວຍເຫລືອເກັບເງິນລ້ຽງເດັກຂອງທ່ານອາດຕ້ອງການອະນຸຍາດຕັດເອົາເງິນຂອງທ່ານ. ພວກເຮົາຈະບອກ ເລກບັນຊີທະນາຄານ ຂອງທ່ານ. ເມື່ອພວກເຮົາຮູ້ຈັກว່າ ເລກບັນຊີທະນາຄານ ນັ້ນຖືກຕ້ອງ, ທ່ານຈະໄດ້ຮັບການແຈ້ງໃຫ້ຮູ້ມື້ເລີ່ມ ແລະ ຈໍານວນຕັດເອົາເງິນ. ມັນໃຊ້ເວລາປະມານ **30** ມື້ ເພື່ອຕັ້ງການຕັດເອົາເງິນ. ທ່ານຕ້ອງດໍາເນີນເຮັດການຈ່າຍເງິນລ້ຽງເດັກຕໍ່ໄປຈົນວ່າການຕັດເອົາເງິນນັ້ນເລີ່ມ.

ຖ້າທະນາຄານຂອງຂ້າພະເຈົ້າບໍ່ເຮັດການຕັດເອົາເງິນຈະເຮັດຢ່າງໃດ?

ຖ້າທະນາຄານຂອງທ່ານບໍ່ເຮັດການຕັດເອົາເງິນຂອງທ່ານຍ້ອນເງິນບໍ່ພຽງພໍ, ຢຸດການຈ່າຍ, ຫລື ປິດບັນຊີ, ພວກເຮົາຈະຍົກເລີກການຕັດເອົາເງິນນັ້ນ. ຖ້າທ່ານຄິດວ່າທະນາຄານຂອງທ່ານຈະບໍ່ເຮັດການຕັດເອົາເງິນ, ກະຣຸນາໂທຫາພວກເຮົາທີ່ເລກ 1-800-468-7422 ເພື່ອຈັດຕຽມເຮັດການຈ່າຍນັ້ນ.

ຂ້າພະເຈົ້າຈະຢຸດ ຫລື ປ່ຽນແປງການຈ່າຍແບບ ອັດໂນມັດ ນີ້ຢ່າງໃດ?

ທະນາຄານຂອງທ່ານບໍ່ສາມາດຢຸດ ຫລື ປ່ຽນແປງການຕັດເອົາເງິນນັ້ນ. ທ່ານຕ້ອງໂທຫາ ສູນການໃຫຍ່ຂອງພວກເຮົາ ທີ່ເລກ 1-800-468-7422 ເພື່ອຢຸດ ຫລື ປ່ຽນແປງການຕັດເອົາເງິນ.

ຣັດວໍຊິງຕັນ
ກົມສັງຄົມ ແລະ ສິງເຄາະ
ຜະແນກຊ່ວຍເຫລືອເກັບເງິນລ້ຽງເດັກ
DIVISION OF CHILD SUPPORT (DCS)

ການອະນຸຍາດຈ່າຍແບບ ອັດໂນມັດ
AUTOMATIC PAYMENT AUTHORIZATION

ຊື່ຂອງພໍ່ແມ່ທີ່ຈ່າຍ		
ບ່ອນຢູ່ ຕູ້ໄປສະນີ ຫລື ຖນົນ		
ເມືອງ	ຣັດ	ຊິບໂຄດ
ເລກໂຊໂຊ	ເລກໂທຣະສັບ ກາງເວັນ	
ເລກບັນຊີ ☐ ເຊັກຄືງ ☐ ເຊວວິງ	ຊື່ທະນາຄານ	
ສາຂາຂອງທະນາຄານ	ເລກໂທຣະສັບຂອງສາຂາ	
ຈຳນວນເງິນຕັດແຕ່ລະເທື່ອ	ລວມຈຳນວນຕັດປະຈຳເດືອນ	
ວັນທີຕັດເອົາເງິນແຕ່ລະເດືອນ	ວັນທີເລີ້ມຕັດເອົາເງິນ	
ຂ້າພະເຈົ້າອະນຸຍາດການຕັດເອົາເງິນຢູ່ຂ້າງເທິງຈາກບັນຊີຂອງຂ້າພະເຈົ້າສຳລັບຈ່າຍໃຫ້ ຫ້ອງການທະບຽນເງິນລ້ຽງເດັກ ຣັດວໍຊິງຕັນ.		
ລາຍເຊັນຜູ້ຖືບັນຊີ		
ລາຍເຊັນຜູ້ຖືບັນຊີ (ສຳລັບບັນຊີຮ່ວມກັນ)		
ຕິດຄັດ ເຊັກ ທີ່ຂີດຂ້າວຽນບອກว่าใช้ບໍ່ໄດ້ ຫລື ໃບຝາກເງິນເອົ້າບັນຊີທະນາຄານມາມຳ		

FOR DCS USE ONLY (ສະເພາະ ຜະແນກ **DCS** ໃຊ້)		
BASIC INDIVIDUAL NUMBER	IV-D CASE NUMBER	DCS OFFICE